ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຂາເຂົ້າ ເລກທີ 0442
ວັນທີ 22/01/25

0244532400

119

ກະຊວງສາທາລະນະສຸກ

ຫ້ອງການ

ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 22 JAN 2025

# ໜັງສືສະເໜີ

ຮຽນ: ທ່ານຫົວໜ້າຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

ເລື່ອງ: ແຈ້ງການຄັ້ງສຸດທ້າຍ ກ່ຽວກັບ ການພິມຮູບພາບຄຳເຕືອນສຸຂະພາບຂອງ ຊອງ ແລະ ຕູດ ຢາສູບ.

- ອີງຕາມ ກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 09/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການບັນຈຸ, ການຫຸ້ມຫໍ່, ການພິມຄຳເຕືອນສຸຂະພາບ ແລະ ສະຫຼາກ ຜະລິດຕະພັນຢາສູບແບບອຸດສາຫະກຳ ສະບັບເລກທີ 1090/ສທ, ລົງວັນທີ 13 ພຶດສະພາ 2024;
- ອີງຕາມ ໜັງສືສະເໜີເຖິງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ 2250/ຫກ, ລົງວັນທີ 10 ກັນຍາ 2024.

ຫ້ອງການກະຊວງສາທາລະນະສຸກ ຂໍຖືເປັນກຽດຮຽນມາຍັງທ່ານ ເພື່ອແຈ້ງການຫາບັນດາຫົວໜ່ວຍທຸລະກິດທີ່ດຳເນີນທຸລະກິດກ່ຽວກັບຢາສູບ ໃນການພິມຄຳເຕືອນສຸຂະພາບ ຮູບແບບໃໝ່ ຂອງ ສປປ ລາວ ທີ່ກຳນົດໃຫ້ຊອງ ແລະ ຕູດຢາສູບທັງໝົດ ທີ່ຈໍລະຈອນຈຳໜ່າຍ ໃນ ສປປ ລາວ ຊຶ່ງກະຊວງສາທາລະນະສຸກໄດ້ສົ່ງໜັງສືສະເໜີຫາກະຊວງອຸດສະຫະກຳການຄ້າສອງຄັ້ງແລ້ວເພື່ອແຈ້ງໃຫ້ບໍລິສັດ, ຊຶ່ງໄລຍະເວລາປ່ຽນຜ່ານ ທີ່ກຳນົດໃນຂໍ້ຕົກລົງແມ່ນໃຫ້ເລີ່ມມີສະຫຼາກຮູບແບບໃໝ່ເລີ່ມແຕ່ວັນທີ 05 ທັນວາ 2024 ແຕ່ໃນຕົວຈິງທີ່ໄດ້ຕິດຕາມຮ້ານຄ້າ ເຫັນວ່າຍັງມີການຈຳໜ່າຍຜະລິດຕະພັນຢາສູບທີ່ມີຄຳເຕືອນສຸຂະພາບຮູບແບບເກົ່າ ທີ່ຜະລິດໃນເດືອນທັນວາ 2024.

ດັ່ງນັ້ນ, ຫ້ອງການກະຊວງສາທາລະນະສຸກ ຈຶ່ງໄດ້ຂໍໃຫ້ທ່ານແຈ້ງຄັ້ງສຸດທ້າຍມາຍັງບັນດາບໍລິສັດ ພາຍໃນປະເທດ, ບໍລິສັດນຳເຂົ້າຢາສູບຈາກຕ່າງປະເທດ ແລະ ຜູ້ປະກອບການ ຕ້ອງໄດ້ພິມຄຳເຕືອນສຸຂະພາບຮູບແບບໃໝ່ອອກມາຈໍລະຈອນຈຳໜ່າຍໃນທ້ອງຕະຫຼາດ ເລີ່ມແຕ່ວັນທີ 01 ມີນາ 2025 ເປັນຕົ້ນໄປເທົ່ານັ້ນ, ຄະນະສະເພາະກິດ ສົມທົບເຈົ້າໜ້າທີ່ ຈະໄດ້ລົງຕິດຕາມ ແລະ ປະຕິບັດມາດຕະການຢ່າງເຂັ້ມງວດຕໍ່ຜູ້ທີ່ລະເມີດ, ສຳລັບຕົ້ນສະບັບຮູບພາບຄຳເຕືອນ ແລະ ການກວດກາຄວາມຖືກຕ້ອງຮູບແບບຂອງຊອງ ແລະ ຕູດ ຢາສູບ ແມ່ນໃຫ້ປະສານກັບກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ຕາມລະບຽບການດ້ວຍ.

ຫົວໜ້າຫ້ອງການ

ຫ້ອງການ

ນ. ອາພອນ ວິຊາເທບ

ບ່ອນນຳສົ່ງ:

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ

ສຳເນົາໄວ້ 01 ສະບັບ